# ກອງປະຊຸມສຳມະນາກ່ຽວກັບສິດທິມະນຸດປຶກສາຫາລືກ່ຽວກັບ ການຈັດຕັ້ງຂໍ້ສະເໜີແນະ ພາຍໃຕ້ກົນໄກທົບທວນປະຈຳໄລຍະ

ກະຊວງການຕ່າງປະເທດ ຮ່ວມກັບອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ສະຫະພາບເອີຣົບ (EU) ໄດ້ຈັດຕັ້ງກອງປະຊຸມສຳມະນາກ່ຽວກັບສິດທິມະນຸດ ໃນວັນທີ 16 ກຸມພາ 2011 ທີ່ ນະຄອນຫຼວງວຽງຈັນ. ກອງປະຊຸມສຳມະນາ ແມ່ນການປະກອບສ່ວນອັນໜຶ່ງໃຫ້ແກ່ ການຈັດຕັ້ງປະຕິບັດ ຂໍ້ສະເໜີແນະພາຍໃຕ້ກົນໄກທົບທວນປະຈຳໄລຍະ (Universal Periodic Review ຫຼື UPR) ຂອງ ສປປ ລາວ.




ກອງປະຊຸມສຳມະນາໄດ້ຮັບການຈັດຂຶ້ນ ພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ອາລຸນແກ້ວ ກິດຕິຄຸນ, ຜູ້ຊ່ວຍລັດຖະມົນຕີວ່າການ ກະຊວງ ການຕ່າງປະເທດ, ທ່ານ ຣອບຟ ທີແມນ, ຫົວໜ້າໜ່ວຍງານ ສິດທິມະນຸດ, ສະຫະພາບເອີຣົບ ແລະ ທ່ານ ນ. ກຽວໂກະ ໂຍໂກສຸກະ, ວ່າການຜູ້ຕາງໜ້າ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ. ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ ມີຜູ້ຕາງໜ້າຈາກ ບັນດາກະຊວງ ແລະ ອົງການຈັດຕັ້ງຂອງລັດ, ສະຖານທູດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ 150 ທ່ານ.

ກອງປະຊຸມສຳມະນາດັ່ງກ່າວນີ້ໄດ້ຈັດຂຶ້ນໜຶ່ງວັນກ່ອນໜ້າກອງປະຊຸມພົບປະບໍ່ເປັນທາງການ ດ້ານ ສິດທິມະນຸດ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ. ຈຸດປະສົງຂອງກອງປະຊຸມ ແມ່ນ ເພື່ອປຶກສາ ຫາລືກ່ຽວກັບບັນຫາທີ່ພົວພັນເຖິງ ກົນໄກທົບທວນປະຈຳໄລຍະ, ບາດກ້າວຕໍ່ໄປໃນການຈັດ ຕັ້ງປະຕິບັດ ຂໍ້ສະເໜີແນະ ພາຍໃຕ້ກົນໄກດັ່ງກ່າວ ເຊິ່ງ ສປປ ລາວ ທີ່ໄດ້ໃຫ້ການສະໜັບສະໜູນ.

ກົນໄກທົບທວນປະຈຳໄລຍະ ແມ່ນຂະບວນການສະເພາະ ເຊິ່ງພົວພັນເຖິງການທົບທວນ ສິດທິ ມະນຸດ ຂອງສະມາຊິກອົງການ ສປຊ 192 ປະເທດ ໜຶ່ງຄັ້ງໃນທຸກໆສີ່ປີ. ການທົບທວນດັ່ງກ່າວ ຖືກດຳ ເນີນຂຶ້ນ ໂດຍລັດຕ່າງໆ ເຊິ່ງມີການເຂົ້າຮ່ວມຢ່າງເປັນເຈົ້າການຂອງລັດທີ່ຖືກທົບທວນ. ສປປ ລາວ ໄດ້ ຜ່ານຂະບວນ ການທົບທວນດັ່ງກ່າວໃນເດືອນພຶດສະພາໃນປີ 2010 ແລະ ຜົນຂອງການທົບທວນ ດັ່ງ ກ່າວ ໄດ້ຖືກຮັບຮອງ ຢູ່ໃນກອງປະຊຸມຄົບຂອງສະພາສິດທິມະນຸດ ສປຊ ຄັ້ງທີ່ 15 ໃນເດືອນກັນຍາ 2010 ທີ່ເຊີແນວ, ປະເທດ ສະວິດສ.



ໃນການທົບທວນດັ່ງກ່າວ, ວົງຄະນາຍາດສາກົນ ໄດ້ຍົກຂໍ້ສະເໜີແນະຈຳນວນ 107 ທີ່ພົວພັນ ເຖິງ ການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ ໃຫ້ ສປປ ລາວ ພິຈາລະນາຈັດຕັ້ງປະຕິບັດ. ສປປ ລາວ ສະໜັບສະໜູນ ຂໍ້ສະເໜີ ແນະຈຳນວນ 71 ຂໍ້, ສະໜັບສະໜູນບາງສ່ວນຈຳນວນ 15 ຂໍ້ ແລະ ມີ 21 ຂໍ້ ທີ່ ສປປ ລາວ ບໍ່ໃຫ້ການສະໜັບສະໜູນ.

ໃນຄຳເຫັນກ່າວເປີດ, ທ່ານ ອາລຸນແກ້ວ ກິດຕິຄຸນ, ຜູ້ຊ່ວຍລັດຖະມົນຕີວ່າການກະຊວງການ ຕ່າງປະເທດ ໄດ້ກ່າວວ່າ: "ກົນໄກທົບທວນປະຈຳໄລຍະ ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ສະມາຊິກ ອົງການ ສປຊ ທັງໝົດ ໄດ້ມີການມີການສົນທະນາທີ່ສ້າງສັນກ່ຽວກັບສິດທິມະນຸດ ບົນພື້ນຖານຫຼັກການ

ພາວະວິໄສ, ບໍ່ເລືອກປະຕິບັດ, ຫຼີກລ້ຽງການນຳໃຊ້ມາດຕະຖານສອງໜ້າ, ບໍ່ໃຫ້ມີການເມືອງແຊກຊ້ອນ ໂດຍມີຈຸດປະສົງ ເພື່ອສ້າງຄວາມເຂົ້າອົກ ແລະ ເຂົ້າໃຈທີ່ດີຂຶ້ນກ່ຽວກັບການປະຕິບັດດ້ານສິດທິມະນຸດຢູ່ໃນບັນດາປະເທດ ສະມາຊິກອົງການ ສປຊ, ປັບປຸງ ແລະ ເສີມຂະຫຍາຍການສົ່ງເສີມ ແລະ ປົກປ້ອງສິດທິມະນຸດໃນທົ່ວໂລກ ແລະ ພາຍໃນປະເທດ ອີງຕາມກົດບັດອົງການສະຫະປະຊາຊາດ, ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ, ສົນທິສັນຍາສາກົນດ້ານສິດທິມະນຸດ ບົນພື້ນຖານລັດຖະທຳມະນູນ ແລະກົດໝາຍພາຍແຫ່ງຊາດ”. ທ່ານຍັງ ໄດ້ກ່າວຕື່ມອີກວ່າ ສປປ ລາວ ຖືວ່າການເຂົ້າຮ່ວມໃນກົນໄກທົບທວນປະຈຳໄລຍະຄັ້ງນີ້ ເປັນກາລະໂອກາດ ໃຫ້ ສປປ ລາວ ຊີ້ແຈງໃຫ້ວົງຄະນາຍາດສາກົນຮັບຊາບກ່ຽວກັບນະໂຍບາຍອັນຖືກຕ້ອງເປັນທຳ, ກົດພາຍ ກໍຄືພາກປະຕິບັດພາຍໃນຂອງ ສປປ ລາວ, ສາກົນໄດ້ຮັບຊາບກ່ຽວກັບຜົນສຳເລັດດ້ານຕ່າງໆຂອງ ສປປ ລາວ ໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດຂອງປະຊາຊົນລາວບັນດາເຜົ່າ, ພ້ອມທັງເປັນໂອກາດໃຫ້ ສປປ ລາວ ຖອດຖອນບົດຮຽນຈາກພາກປະຕິບັດທີ່ດີຕ່າງໆ ໂດຍຜ່ານການສົນທະນາສະພາສິດທິມະນຸດ ທີ່ສ້າງສັນກັບປະເທດສະມາຊິກ ແລະປະເທດສັງເກດການໃນລະຫວ່າງກອງປະຊຸມທົບທວນທີ່ ເຊີແນວ



ທ່ານ ຣອບຟ ທີແມນ, ຫົວໜ້າໜ່ວຍງານສິດທິມະນຸດ, ສະຫະພາບເອີຣົບ ກ່າວວ່າ: “ ກົນໄກທົບທວນປະຈຳໄລຍະ ແມ່ນການປະດິດສ້າງທີ່ມີລັກສະນະສຳຄັນໃນຂົງເຂດສິດທິມະນຸດ ແລະ ສະຫະພາບເອີຣົບ ກໍໃຫ້ຄວາມສຳຄັນໃນກົນໄກດັ່ງກ່າວ. ທ່ານຍັງໄດ້ກ່າວຕື່ມອີກວ່າ ສະຫະພາບເອີຣົບ ສະແດງ ຄວາມຊົມເຊີຍ ສປປ ລາວ ທີ່ໄດ້ສະໜັບສະໜູນ ແລະ ຂໍ້ສະເໜີແນະເປັນຈຳນວນຫຼາຍ ໃນຂະບວນການ ທົບທວນປະຈຳໄລຍະດັ່ງກ່າວນີ້.

ທ່ານ ນ. ກຽວໂກະ ໂຢໂກສຸກະ, ວ່າການຜູ້ຕາງໜ້າອົງການ ສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ກໍໄດ້ກ່າວຄຳເຫັນໃນພິທີເປີດວ່າ: ການຈັດຕັ້ງປະຕິບັດຂໍ້ສະເໜີແນະພາຍໃຕ້ກົນໄກ ທົບທວນປະຈຳໄລຍະ ແມ່ນອົງປະກອບທີ່ສຳຄັນໃນຂະບວນການທົບທວນ. ທ່ານຍັງໄດ້ກ່າວຕື່ມອີກວ່າຖ້າປາສະຈາກການຈັດຕັ້ງປະຕິບັດທີ່ມີປະສິດທິຜົນ, ບັນດາຂໍ້ສະເໜີແນະທີ່ໄດ້ສະໜັບສະໜູນນັ້ນ ຈະບໍ່ມີ ຄວາມໝາຍຫຍັງເລີຍ ແລະ ການເຂົ້າຮ່ວມຂອງ ສປປ ລາວໃນຂະບວນການດັ່ງກ່າວນີ້ຈະບໍ່ມີຄວາມ ໝາຍຫຍັງຫຼາຍສຳລັບ ສປປ ລາວ ແລະ ວົງຄະນາຍາດສາກົນ. ກົງກັນຂ້າມ, ການຈັດຕັ້ງປະຕິບັດທີ່ມີປະສິດ ທິພາບ ຈະເປັນພື້ນຖານໃຫ້ ສປປ ລາວ ໃນການສົ່ງເສີມ ແລະ ປົກປ້ອງສິດທິມະນຸດອີງຕາມລັດຖະທຳມະນູນ ແລະ ພັນທະສາກົນ".



ກອງປະຊຸມສຳມະນາ ໄດ້ຮັບຟັງການສະເໜີບົດຈາກຜູ້ຊ່ຽວຊານພາຍໃນ ແລະ ຕ່າງປະເທດກ່ຽວກັບແງ່ມູມຕ່າງໆໃນການຈັດຕັ້ງປະຕິບັດຂໍ້ສະເໜີແນະພາຍໃຕ້ກົນໄກທົບທວນປະຈຳໄລຍະຂອງ ສປປ ລາວ, ໃນນັ້ນ, ກ້ວມເອົາບັນຫາສຳຄັນຂອງຂະບວນການ UPR, ການກະກຽມເພື່ອຈັດຕັ້ງປະຕິບັດຂໍ້ສະເໜີແນະ, ບົດຮຽນ ແລະ ປະສົບການຂອງສາກົນ ແລະ ພາກພື້ນ, ຄວາມຈຳເປັນດ້ານງົບປະມານ ແລະ ການຈັດຕັ້ງປະຕິບັດຂໍ້ສະເໜີແນະໂດຍຜ່ານການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ VII.